ວາລະສານວິທະຍາສາດມະຫາວິທະຍາໄລສຸພານຸວົງ, ຄົ້ນຄວ້າວິໄຈສະຫະສາຂາວິຊາ, ວາລະສານເປີດກວ້າງ
ສະບັບທີ 6, ເຫຼັ້ມທີ 1, ມັງກອນ-ມິຖຸນາ 2020, ເລກທະບຽນ ISSN 2521-0653

# ການໃຊ້ ແລະ ຄວາມຕ້ອງການໃຊ້ຫໍສະໝຸດຂອງນັກສຶກສາ ແລະ ອາຈານ ມະຫາວິທະຍາໄລສຸພານຸວົງ ສາທາລະນາລັດ ປະຊາທິປະໄຕ ປະຊາຊົນລາວ[1]

**ແດງ ແສງອາລຸນ[2]**

*ຫໍສະໝຸດ ມະຫາວິທະຍາໄລສຸພານຸວົງ*

## ບົດຄັດຫຍໍ້

ການສຶກສາຄັ້ງນີ້ມີຈຸດປະສົງເພື່ອສຶກສາການໃຊ້ ແລະ ຄວາມຕ້ອງການໃຊ້ບໍລິການຫໍສະໝຸດ ມະຫາວິທະຍາໄລ ສຸພານຸວົງ ເປັນການວິໄຈເຊີງສຳຫຼວດ ເຄື່ອງມືທີ່ໃຊ້ໃນການວິໄຈແມ່ນແບບສອບຖາມ ການສຶກສາເຊີງປະລິມານແມ່ນລວບລວມຂໍ້ມູນຈາກນັກສຶກສາ ແລະ ອາຈານທີ່ສັງກັດຢູ່ມະຫາວິທະຍາໄລສຸພານຸວົງ ໄດ້ກຸ່ມຕົວຢ່າງທັງໝົດ 497 ຄົນ ແລະ ໄດ້ຮັບແບບສອບຖາມກັບມາ 100% ວິເຄາະຂໍ້ມູນໂດຍໃຊ້ໂປຣແກມສຳເລັດຮູບທາງສັງຄົມສາດ ໂດຍຊອກຫາຄ່າຄວາມຖີ່ (Frequency) ເປີເຊັນ (Percentage) ຄ່າສະເລ່ຍ (Mean) ແລະ ຄ່າບ່ຽງເບນມາດຕະຖານ (Standard Deviation) ຜົນການວິໄຈພົບວ່າ:

1) ການໃຊ້ບໍລິການຫໍສະໝຸດ : ກຸ່ມຕົວຢ່າງທີ່ເປັນນັກສຶກສາ ແລະ ອາຈານສ່ວນຫຼາຍເປັນເພດຊາຍເທົ່າກັບ (60.44% ແລະ 65.40%) ນັກສຶກສາມີຈຸດປະສົງເຂົ້າໃຊ້ຫໍສະໝຸດເພື່ອສຶກສາຫາຄວາມຮູ້ເພີ່ມເຕີມສ່ວນອາຈານມີຈຸດປະສົງເຂົ້າໃຊ້ຫໍສະໝຸດເພື່ອອ່ານປຶ້ມຕຳລາທາງວິຊາການ, ນັກສຶກສາ ແລະ ອາຈານເຂົ້າໃຊ້ຫໍສະໝຸດອາທິດລະ 1 ຄັ້ງໃນຊ່ວງເວລາຫວ່າງຈາກການຮຽນການສອນ, ຄົ້ນຫາປຶ້ມ ຫຼື ເອກະສານຕາມຖ້ານຕູ້ດ້ວຍຕົນເອງໃນລະດັບຫຼາຍ, ໃຊ້ປຶ້ມຕຳລາຫຼາຍ ແລະ ສ່ວນຫຼາຍໃຊ້ພາສາລາວ ນອກຈາກນີ້ຍັງໃຊ້ບໍລິການຢືມ-ສົ່ງປຶ້ມໃນລະດັບປານກາງ.

2) ບັນຫາການໃຊ້ບໍລິການຫໍສະໝຸດ : 1) ດ້ານຫໍສະໝຸດ ນັກສຶກສາ ແລະ ອາຈານໃຫ້ຄວາມເຫັນວ່າຫໍສະໝຸດບໍ່ມີຈັກກ້ອບປີໃນລະດັບຫຼາຍ, ຊັບພະຍາກອນສາລະສົນເທດທີ່ໃຊ້ໃນການຮຽນ-ການສອນບໍ່ພຽງພໍໃນລະດັບຫຼາຍ, ເຄືອຂ່າຍຄອມພິວເຕີທີ່ໃຊ້ໃນການສືບຄົ້ນປຶ້ມໃນຖານຂໍ້ມູນ (OPAC) ມີຄວາມລ້າຊ້າ ແລະ ບໍ່ພຽງພໍໃນລະດັບປານກາງ ແລະ ຫໍສະໝຸດບໍ່ມີການປະຊາສຳພັນໃຫ້ຮູ້ເຖິງບໍລິການຕ່າງໆຂອງຫໍສະໝຸດໃນລະດັບປານກາງ. 2) ດ້ານຜູ້ໃຊ້ບໍລິການ : ນັກສຶກສາ ແລະ ອາຈານບໍ່ມີເວລາເຂົ້າໃຊ້ຫໍສະໝຸດເນື່ອງຈາກຫໍສະໝຸດປິດໃນເວລາພັກທ່ຽງໃນລະດັບຫຼາຍ 3) ດ້ານຜູ້ໃຫ້ບໍລິການ : ຜູ້ໃຫ້ບໍລິການມີຈຳນວນໜ້ອຍໃຫ້ບໍລິການບໍ່ທົ່ວເຖິງໃນລະດັບປານກາງ.

3) ຄວາມຕ້ອງການໃຊ້ບໍລິການຫໍສະໝຸດ : ນັກສຶກສາ ແລະ ອາຈານຕ້ອງການໃຫ້ຫໍສະໝຸດມີຄວາມສະອາດ ເປັນລະບຽບ ແລະ ມີການຕົບແຕ່ງທີ່ສວຍງາມໃນລະດັບຫຼາຍ, ນັກສຶກສາຕ້ອງການວາລະສານພາສາລາວໃຫ້ຄົບທຸກລາຍການ ສ່ວນອາຈານຕ້ອງການປຶ້ມອ້າງອີງ (ວັດຈະນານຸກົມລາວ) ໃນລະດັບຫຼາຍ, ນັກສຶກສາ ແລະ ອາຈານຕ້ອງການໃຊ້ບໍລິການຊ່ວງພັກທ່ຽງໃນລະດັບຫຼາຍ, ຕ້ອງການຢືມວິທະຍານິພົນ ແລະ ບົດໂຄງການຈົບຊັ້ນ

---

[1] **ການອ້າງອີງພາສາລາວ**: ແດງ ແສງອາລຸນ .(2020). **ການໃຊ້ ແລະ ຄວາມຄ້ອງການໃຊ້ຫໍສະໝຸດຂອງນັກສຶກສາ ແລະ ອາຈານມະຫາວິທະຍາໄລສຸພານຸວົງ ໃນ ສາທາລະນາລັດ ປະຊາທິປະໄຕ ປະຊາຊົນລາວ**.*ວາລະສານວິທະຍາສາດມະຫາວິທະຍາໄລ ສຸພານຸວົງ, ເລກທະບຽນ ISSN 2521-0653, ສະບັບທີ: 6, ເຫຼັ້ມທີ 1, ໜ້າທີ: 217 - 224.*

[2] ***ຕິດຕໍ່ພົວພັນ:***
*ແດງ ແສງອາລຸນ, ຫໍສະໝຸດ ມະຫາວິທະຍາໄລສຸພານຸວົງ, Tel: +856 020 28623360, E-mail: daengsal2020@gmail.com*

ໃນລະດັບຫຼາຍ, ນັກສຶກສາຕ້ອງການບໍລິການສອນລະດັບປານກາງ ສ່ວນອາຈານຕ້ອງການບໍລິການແນະນຳການອ່ານໃນລະດັບຫຼາຍ.

**ຄຳສຳຄັນ:** ການໃຊ້, ຄວາມຕ້ອງການໃຊ້, ຫໍສະໝຸດ, ມະຫາວິທະຍາໄລ ສຸພານຸວົງ

SENGALOUN. 2020. Souphanouvong Journal: Multi-disciplinary Research of Souphanouvong University: ISSN 2521-0653. Vol. 6, Issue 1: Page 217 - 224.

# The Usage and the Need for Library Usage of Students and Lecturers in Souphanouvong University of Lao People's Democratic Republic

**Deng SENGALOUN [3]**

*Library, Souphanouvong University.*

**ABSTRACT**

The aim of this research is to study the usage, problems of usage and the need of usage of Souphanouvong University's Library. The research methodology was survey research by using the questionnaires, the quantitative are data studies collected from students and lectures affiliated at Souphanouvong University The samplings was in total 497 participants, and receive a 100% return questionnaire, the data were analyzed using the social science statistics to find the frequency, percentage, mean and standard deviation. The results showed that:

1) The usage of library service: the samplings student male 60.44% and professor males 65.40%. Mostly students had an aim to study and most of lecturers used library for reading books and academic documents. Moreover, students and lectures used library once a week. Mostly students and lectures used library during the free time of studying and teaching. Mostly students and lecturers found books by browsing bookshelves themselves. Moreover, both groups use books/text books the most, which for students and lecturers and mostly in Laotian use circulation service in middle level.

2) Problems of using library: 1) Library: most of students and lecturers commented that library had no copy machine. Information Resources; most of students and lecturers commented that Library resources are not enough in the high level. Technology; the server of computer network (OPAC) was slow in the medium level for searching were not enough in the medium level. Public Relation; both students and lecturers answered that the library did not have no Public Relation to inform the service of library which in the medium level. 2) Users: mostly answered that they did not had time to use library because library was closed during lunch time high level. 3) Service staffs; both students and lecturers answered that the numbers of service staff were not sufficient and effected to the service which was not enough in the medium level.

3) The need of library usage which were: all most of students and lecturers need the library to be cleaned and in good decoration in the high level, Information Resources: students need the journal in Laotian in every titles in high level and lecturers need references books (dictionary of Laotian) in high level. Library hours; students and lecturers both need library open during the lunch time in high level. Circulation Service: students and lecturers need to borrow thesis and research in high level. Information Service: students need Instruction Service in medium level and lecturers need guidance service in high level.

**Keywords:** The usage, need of usage**,** Library of Souphanouvong University

[3] ***Correspondence:***
*Deng SENGALOUN library Souphanouvong University E-mail: daengsal2020@gmail.com.*
*Tel: +856 020 2862 3360*

## 1. ພາກສະເໜີ

ມະຫາວິທະຍາໄລສຸພານຸວົງໄດ້ສ້າງຕັ້ງຂຶ້ນເມືອປີ ຄ.ສ 2003 ໂດຍມີຈຸດປະສົງເພື່ອຂະຫຍາຍຕາໜ່າງທາງດ້ານການສຶກສາໄປສູ່ພາກເໜືອຂອງ ປະເທດລາວໃນແຂວງຫຼວງພະບາງ ຕາມດຳລັດຂອງນາຍຍົກລັດຖະມົນຕີ ສະບັບເລກທີ 169/ນຍ ລົງວັນທີ 4 ພຶດສະພາ 2003 ແລະ ໄດ້ເປີດການສຶກສາຢ່າງເປັນາທາງການເມື່ອວັນທີ 5 ພຶດສະພາ 2003 ເປັນສະຖາບັນການສຶກສາລະດັບປະລິນຍາຕີແຫ່ງທຳອິດໃນພາກເໜືອຂອງປະເທດລາວໄດ້ເປີດການຮຽນ-ການສອນທັງໝົດ 6 ຄະນະ, ມີພະນັກງານອາຈານທັງໝົດ 404 ຄົນ ແລະ ມີນັກສຶກສາ ຈານວນ 4,025 ຄົນ (ສົກ 2016-2017).

ຫໍສະໝຸດຂຶ້ນສ້າງພ້ອມກັບມະຫາວິທະຍາໄລສຸພານຸວົງ ເພື່ອສົ່ງເສີມການຮຽນ-ການສອນ ແລະ ການສຶກສາຄົ້ນຄວ້າເລີ່ມທຳອິດມີ ພະນັກງານພຽງ 2 ຄົນ ແລະ ມີຊັບພະຍາກອນສາລະສົນເທດຈຳນວນໜ້ອຍເຊິ່ງໄດ້ຮັບການຊ່ວຍເຫຼືອຈາກມະຫາວິທະຍາໄລແຫ່ງຊາດ ແລະ ມະຫາວິທະຍາໄລປະເທດໃກ້ຄຽງມີທັງໝົດປະມານ 1,000 ຫົວ ມາເຖິງປີ ຄ.ສ 2004 ໄດ້ມີການສ້າງອາຄານຫໍສະໝຸດຫຼັງໃໝ່ຂຶ້ນໃນວິທະຍາເຂດບ້ານດອນໃໝ່ ຈຳນວນ 1 ຫຼັງປະກອບມີ 2 ຊັ້ນ ຊັ້ນທີ 1 ແບ່ງອອກເປັນ 2 ສ່ວນ ສ່ວນໜຶ່ງເປັນຫ້ອງການຂອງແຕ່ລະພະແນກ ສ່ວນທີ່ສອງ ເປັນຫ້ອງອ່ານ ປະກອບມີປຶ້ມ ພາສາລາວ, ພາສາໄທ, ວິທະ ຍານິພົນ, ບົດໂຄງການຈົບຊັ້ນ ນອກຈາກນີ້ຍັງມີວາລະສານ ແລະ ໜັງສືພິມ ສ່ວນຊັ້ນທີ 2 ເປັນຫ້ອງອ່ານປຶ້ມພາສາອັງກິດ, ຫໍສະໝຸດມະຫາວິທະຍາໄລສຸພານຸວົງ ໄດ້ຮັບການສະໜັບສະໜູນຈາກກົມຄວາມຮ່ວມມືເພື່ອການພັດທະນາລະຫວ່າງປະເທດ ກະຊວງການຕ່າງປະເທດລັດຖະບານໄທ (TICA) ຜ່ານການການອະນຸມັດໂຄງການຂອງໂຄງການຮ່ວມມືເພື່ອການພັດທະນາລະຫວ່າງປະເທດ ເຊິ່ງໄດ້ງົບປະ ມານຈາກກະຊວງການຕ່າງປະເທດ ແລະ ງົບປະມານສົມ ທົບຈາກມະຫາວິທະຍາໄລຊຽງໃໝ່ ໃນໂຄງການພັດທະນາຫໍສະໝຸດມະຫາວິທະຍາໄລສຸພານຸວົງ ເຊິ່ງເປັນການຮ່ວມມືລະຫວ່າງມະຫາວິທະຍາໄລຊຽງໃໝ່ ແລະ ມະຫາວິທະຍາ ໄລ ສຸພານຸວົງ ພາຍໃຕ້ແຜນງານການຮ່ວມມືທາງວິຊາການດ້ານການສຶກສາລະຫວ່າງໄທ-ລາວເປັນໄລຍະເວລາ 3 ປີ (2010-2013) ມະຫາວິທະຍາໄລຊຽງໃໝ່ໄດ້ມອບໝາຍໜ້າທີ່ໃຫ້ສຳນັກຫໍສະໝຸດມະຫາວິທະຍາໄລຊຽງໃໝ່ເປັນພາກສ່ວນຮັບຜິດຊອບໂຄງການໂດຍໃຫ້ຄວາມຊ່ວຍເຫຼືອໃນການຈັດລະບົບຫໍສະໝຸດອັດຕະໂນມັດ ແລະ ຍັງທຶນການສຶກສາຕໍ່ລະດັບປະລິນຍາໂທ ສາຂາສາລະສົນເທດສຶກສາ ພາກ ວິຊາບັນດາລັກສາດ ແລະ ສາລະສົນເທດສາດ ຈຳນວນ 2 ທຶນ ແລະ ທຶນຝຶກອົບຮົມຫຼັກສູດວິຊາສະເພາະໄລຍະສັ້ນ ພ້ອມທັງຝຶກການປະຕິບັດວຽກງານໃນ 5 ຫຼັກສູດຄື: ຫຼັກສູດການບໍລິຫານຈັດການຫໍສະໝຸດຂອງຜູ້ບໍລິຫານ, ຫຼັກສູດການສ້ອມແປງປຶ້ມ, ຫຼັກສູດການພັດທະນາ ແລະ ຈັດລະບົບສາລະສົນເທດ, ຫຼັກສູດດ້ານເຕັກໂນໂລຊີ ແລະ ການສື່ສານ ແລະ ຫຼັກສູດດ້ານການບໍລິການຫໍສະໝຸດມະຫາວິທະຍາ ໄລ (ມະຫາວິທະຍາໄລຊຽງໃໝ່ສຳນັກຫໍສະໝຸດ, 2014. ໜ້າ 51-52).
ຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ VIII 2016 - 2020, 2015: 2, 5-6)

ຫໍສະໝຸດມີການພັດທະນາຢ່າງຕໍ່ເນື່ອງ ມີຊັບພະຍາ ກອນສາລະສົນເທດປະເພດ ສິ່ງພິມ ໄດ້ແກ່ ປຶ້ມຕຳລາວິຊາການ, ປຶ້ມທົ່ວໄປ, ບົດວິທະຍານິພົນ, ບົດຈົບຊັ້ນຂອງນັກສຶກສາເປັນຕົ້ນ ທັງໝົດມີປະມານ 30,600 ຫົວ ສ່ວນຫຼາຍເປັນພາສາຕ່າງປະເທດ ແລະ ມີພາສາລາວຈຳນວນໜ້ອຍ ນອກຈາກປຶ້ມແລ້ວຍັງມີວາລະສານ ແລະ ໜັງສືພິມ ທີ່ກຽມພ້ອມໄວ້ໃຫ້ບໍລິການແກ່ຜູ້ໃຊ້, ຫໍສະໝຸດມີການຈັດບໍລິການຂອງຫໍສະໝຸດ 4 ບໍລິການ ໄດ້ແກ່: ບໍລິການການອ່ານ,

ບໍລິການຢືມ-ສົ່ງປຶ້ມ, ບໍລິການຕອບຄໍາຖາມ ແລະ ຊ່ວຍການຄົ້ນຄວ້າ, ບໍລິການຄົ້ນຫາລາຍຊື່ ຊັບພະຍາກອນສາລະສົນເທດໃນຖານຂໍ້ມູນ (OPAC) ນອກຈາກນີ້ ຫໍສະໝຸດຍັງມີສິ່ງອານວຍ ຄວາມສະດວກເຊັ່ນ: ມີຫ້ອງອ່ານກວ້າງຂວາງສາມາດ ຮອງຮັບຜູ້ມາໃຊ້ບໍລິການໄດ້ປະມານ 400 ຄົນ, ມີແອ, ມີພັດລົມ, ມີຕູ້ມ້ຽນຖົງປຶ້ມທີ່ປອດໄພ ແລະ ມີ ຫ້ອງນໍ້າທີ່ສະອາດ ເຊິ່ງເປັນສິ່ງອໍານວຍຄວາມສະດວກ ໃຫ້ແກ່ຜູ້ເຂົ້າຊົມໃຊ້ບໍລິການຂອງຫໍສະໝຸດ.

ຈາກການສໍາຫຼວດຜູ້ໃຊ້ຫໍສະໝຸດ (ສົກ 2015-2016) ພົບວ່າ: ຈາກນັກສຶກສາຈໍານວນ 4,025 ຄົນ ມີນັກ ສຶກສາທີ່ເປັນສະມາຊິກຫໍສະໝຸດຈໍານວນ 740 ຄົນ ແລະ ພົບວ່າ: ຜູ້ເຂົ້າໃຊ້ຫໍສະໝຸດໂດຍສະເລ່ຍ 65 ຄົນຕໍ່ມື້ ຫຼື ເທົ່າກັບ 18,000 ຄົນຕໍ່ປີ ຂອງຈໍານວນ ນັກສຶກສາທັງໝົດຈະເຫັນໄດ້ວ່າ: ເປັນຈໍານວນໜ້ອຍ ແລະ ນັບຕັ້ງແຕ່ກໍ່ສ້າງຫໍສະໝຸດມະຫາວິທະຍາໄລ ສຸພານຸວົງຂຶ້ນ ຍັງບໍ່ມີບົດວິໄຈໃດທີ່ສຶກສາກຽ່ວກັບການ ໃຊ້ ແລະ ຄວາມຕ້ອງການໃຊ້ບໍລິ ການຫໍສະໝຸດ ມະຫາວິທະຍາໄລ ສຸພານຸວົງ ດັ່ງນັ້ນຜູ້ວິໄຈຈຶ່ງສົນໃຈ ທີ່ຈະສຶກສາຜູ້ໃຊ້ບໍລິການຫໍສະໝຸດໃນເລື່ອງ ການໃຊ້ ແລະ ຄວາມຕ້ອງການໃຊ້ບໍລິການຫໍສະໝຸດຂອງ ນັກສຶກສາ ແລະ ອາຈານໃນມະຫາວິທະຍາໄລ ສຸພານຸວົງ ໂດຍມີຈຸດປະສົງເພື່ອສຶກສາການໃຊ້, ບັນຫາໃນ ການໃຊ້ ແລະ ຄວາມຕ້ອງການໃຊ້ບໍລິການຂອງຫໍສະ ໝຸດ ມະຫາວິທະຍາ ໄລ ສຸພານຸວົງ.

## 2. ວິທີການຄົ້ນຄວ້າ

ການສຶກສາຄັ້ງນີ້ ເປັນການສຶກສາຄົ້ນຄວ້າແບບ ປະລິມານ )Quantitative Research) ໂດຍໃຊ້ວິທີ ການສໍາຫຼວດ (Survey) ປະຊາກອນ ແລະ ກຸ່ມ ຕົວຢ່າງທີ່ໃຊ້ໃນການສຶກສາໄດ້ແກ່: ນັກສຶກສາ ແລະ ອາຈານທີ່ສັງກັດໃນມະຫາວິທະຍາໄລ ສຸພານຸວົງ ພາກຮຽນສຶກສາທີ 2 ປີ 2017.

### 2.1 ປະຊາກອນ ແລະ ກຸ່ມຕົວຢ່າງ

ປະຊາກອນທີ່ເປັນນັກສຶກສາ ຈໍານວນ 4,025 ຄົນໂດຍໃຊ້ວິທີການກໍາໜົດກຸ່ມຕົວຢ່າງຈາກ ສູດທາໂຣຢ່າມາເນ່ )Yamane) ໄດ້ກຸ່ມຕົວຢ່າງ 364 ຄົນ ແລະ ປະຊາກອນທີ່ເປັນອາຈານ ຈໍານວນ 219 ຄົນໄດ້ກຸ່ມຕົວຢ່າງ 133 ຄົນ ລວມກຸ່ມຕົວຢ່າງທັງໝົດ 497ຄົນ.

### 2.2 ເຄື່ອງມືທີ່ໃຊ້ໃນການວິໄຈ

ເຄື່ອງມືທີ່ໃຊ້ໃນການວິໄຈ ເປັນແບບສອບ ຖາມ ໂດຍແບ່ງອອກເປັນ 2 ຊຸດໄດ້ແກ່: ແບບສອບ ຖາມ ສໍາລັບນັກສຶກສາ ແລະ ແບບສອບຖາມ ສໍາລັບ ອາຈານ ໂດຍມີຂັ້ນຕອນດໍາເນີນງານດັ່ງນີ້:

**- ຂັ້ນທີ 1** ສຶກສາຂໍ້ມູນພື້ນຖານ ເຊິ່ງຈະສອບ ຖາມກຽ່ວກັບຂໍ້ມູນສ່ວນຕົວຂອງຜູ້ຕອບແບບສອບ ຖາມເຊັ່ນ: ເພດ, ຊັ້ນຮຽນ, ຄະນະທີ່ສຶກສາ ແລະ ຖ້າ ເປັນອາຈານຈະສອບຖາມເຊັ່ນ: ເພດ, ປະສົບການໃນ ການສອນ ແລະ ຄະນະທີ່ສອນ.

**- ຂັ້ນທີ 2** ສຶກສາຂໍ້ມູນການໃຊ້ບໍລິການຫໍສະ ໝຸດ ເຊິ່ງຈະສອບຖາມຂໍ້ມູນການໃຊ້ຫໍສະໝຸດ ປະກອບດ້ວຍ: ຈຸດປະສົງໃນການໃຊ້ບໍລິການຫໍສະໝຸ ດ, ຄວາມຖີ່ໃນການໃຊ້ບໍລິການຫໍສະໝຸດ, ຊ່ວງເວລາ ໃນການໃຊ້ບໍລິການຫໍສະໝຸດ, ການມີຄວາມຮູ້ເລື່ອງ ການເຂົ້າໃຊ້ບໍລິການຫໍສະໝຸດ, ການຄົ້ນຫາປຶ້ມ ຫຼື ເອກະສານທີ່ຕ້ອງການຈາກຫໍສະໝຸດ, ການໃຊ້ ຊັບພະຍາກອນສາລະສົນເທດຂອງຫໍສະໝຸດ, ພາສາ ຂອງຊັບພະຍາກອນສາລະສົນເທດທີ່ໃຊ້ໃນຫໍສະໝຸດ, ບໍລິການທີ່ໃຊ້ໃນຫໍສະໝຸດ.

**- ຂັ້ນທີ 3** ສຶກສາຂໍ້ມູນບັນຫາໃນການໃຊ້ ບໍລິການຫໍສະໝຸດ ເຊິ່ງຈະສອບຖາມບັນຫາໃນການ ໃຊ້ບໍລິການຫໍສະໝຸດປະກອບດ້ວຍ: 1) ດ້ານຫໍສະໝຸ ດ ໄດ້ແກ່: ສະພາບແວດລ້ອມທົ່ວໄປ, ຊັບພະຍາກອນ ສາລະສົນເທດ, ເທກໂນໂລຢີ ແລະ ການປະຊາສໍາພັນ 2) ດ້ານຜູ້ໃຊ້ບໍລິການ 3) ດ້ານຜູ້ໃຫ້ບໍລິການ.

**- ຂັ້ນທີ 4** ສຶກສາຂໍ້ມູນຄວາມຕ້ອງການໃຊ້ບໍລິການຫໍສະໝຸດ ເຊິ່ງຈະສອບຖາມປະກອບດ້ວຍ: 1) ບໍ ລິການພື້ນຖານໄດ້ແກ່: ບໍລິການການອ່ານ ແລະ ບໍລິການຢືມ-ສົ່ງປຶ້ມ 2) ບໍລິການສາລະສົນເທດໄດ້ແກ່: ບໍລິການຢືມລະຫວ່າງຫໍສະໝຸດ, ບໍລິການສົ່ງເອກະສານ, ບໍລິການຂ່າວສານທີ່ທັນສະໄໝ, ບໍລິການຮັບເຮັດດັດສະນີ ແລະ ບົດຄັດຫຍໍ້, ບໍລິການຮອບຮ່ວມເອກະສານອ້າງອີງ, ບໍລິການແປພາສາ, ບໍລິການສືບຄົ້ນສາລະສົນເທດພາຍໃນ ແລະ ນອກຫໍສະໝຸດ, ບໍລິການສອນການໃຊ້ຊັບພະຍາກອນໃນຫໍສະໝຸດ, ບໍລິການແນະນໍາການອ່ານ, ບໍລິການຄວາມຮູ້ສູ່ຊຸມຊົນ, ບໍລິການຈັດພິມ ແລະ ເຜີຍແຜ່ຂໍ້ມູນຂ່າວສານຂອງຫໍສະໝຸດ.

**- ຂັ້ນທີ 5** ສຶກສາຂໍ້ມູນຄວາມຄິດເຫັນຂອງນັກສຶກສາ ແລະ ອາຈານໃນການຈັດບໍລິການຫໍສະໝຸດ.

**2.3 ວິເຄາະຂໍ້ມູນ** ໂດຍໃຊ້ໂປແກມສໍາເລັດຮູບໃນການວິເຄາະຂໍ້ມູນທາງສະຖິຕິ ເພື່ອຫາຄ່າຄວາມຖີ່ (Frequency) ຄ່າເປີເຊັນ (Percentage) ຄ່າສະເລ່ຍ (Mean) ແລະ ຄ່າບ່ຽງເບນມາດຕະຖານ (Standard Deviation-S.D).

## 3. ຜົນໄດ້ຮັບ

### 3.1 ຂໍ້ມູນສ່ວນບຸກຄົນ

ຜົນໄດ້ຮັບຈາກສຶກສາຂໍ້ມູນພື້ນຖານຂອງບຸກຄົນຈາກກຸ່ມຕົວຢ່າງທີ່ເປັນນັກສຶກສາ ຈໍານວນ 364 ຄົນ ພົບວ່າ:ຜູ້ຕອບແບບສອບຖາມສ່ວນຫຼາຍແມ່ນເພດຊາຍກວມເຖິງ 60.44% ແລະ ເພດຍິງ 39.56%, ນັກສຶກສາທີ່ເຂົ້າໃຊ້ບໍລິການຫໍສະໝຸດຫຼາຍກວ່າໝູ່ແມ່ນນັກສຶກສາປີທີ 2 ກວມເອົາ 36.80%, ນັກສຶກສາປີທີ 3 ກວມເອົາ 28.6% ແລະ ນັກສຶກສາປີ 1 ກວມເອົາ 17.90% ສ່ວນກຸ່ມຕົວຢ່າງທີ່ເປັນອາຈານຈໍານວນທັງໝົດ 133 ຄົນພົບວ່າ: ຜູ້ຕອບແບບສອບຖາມສ່ວນຫຼາຍເປັນເພດຊາຍ ກວມເຖິງ 65.40% ແລະ ເພດຍິງ ກວມເອົາ 34.60%, ສ່ວນອາຈານທີ່ມີປະສົບການໃນການສອນຫຼາຍກວ່າໝູ່ແມ່ນລະຫວ່າງ 6-10 ປີ ກວມເອົາ 36.80%, ລະຫວ່າງ 1-5 ປີ ກວມເອົາ 21.10 % ແລະ ລະຫວ່າງ 11-15 ປີ ກວມເອົາ 18.00%.

### 2.2 ການໃຊ້ບໍລິການຫໍສະໝຸດ

ຜົນໄດ້ຮັບຈາກສຶກສາຂໍ້ມູນການໃຊ້ພົບວ່າ: ຈຸດປະ ສົງໃນການເຂົ້າໃຊ້ບໍລິການຫໍສະໝຸດ: ນັກສຶກສາສ່ວນຫຼາຍເຂົ້າໃຊ້ບໍລິການຫໍສະໝຸດ ເພື່ອສຶກສາຫາຄວາມຮູ້ເພີ່ມເຕີມ ກວມເອົາ 63.50% ແລະ ອາຈານສ່ວນຫຼາຍເຂົ້າໃຊ້ບໍລິ ການຫໍສະໝຸດ ເພື່ອອ່ານປຶ້ມຕໍາລາທາງວິຊາການຂອງຫໍສະໝຸດ ກວມເອົາ 43.60%, ຄວາມຖີ່ໃນການເຂົ້າໃຊ້ບໍລິການຫໍສະໝຸດ: ນັກສຶກສາສ່ວນຫຼາຍເຂົ້າໃຊ້ບໍລິການຫໍສະໝຸດ ອາທິດລະ 1 ຄັ້ງ ກວມເອົາ 35.70% ແລະ ອານຈານສ່ວນຫຼາຍເຂົ້າໃຊ້ບໍລິການຫໍສະໝຸດ ອາທິດລະ 1 ຄັ້ງ ກວມເອົາ 26.30%, ເວລາໃນການໃຊ້ບໍລິການຫໍສະໝຸດ: ນັກສຶກສາສ່ວນຫຼາຍເຂົ້າໃຊ້ບໍລິການຫໍສະໝຸດໃນເວລາຫວ່າງຈາກການຮຽນ ກວມເອົາ 92.00% ແລະ ອາຈານສ່ວນຫຼາຍເຂົ້າໃຊ້ບໍລິການຫໍສະໝຸດໃນເວລາຫວ່າງຈາກການສອນ ກວມເອົາ 71.40%, ການມີຄວາມຮູ້ເລື່ອງການເຂົ້າໃຊ້ບໍລິການຫໍສະໝຸດ: ນັກສຶກສາສ່ວນຫຼາຍມີຄວາມຮູ້ເລື່ອງການເຂົ້າໃຊ້ບໍລິການຫໍສະໝຸດໂດຍການຮຽນຮູ້ດ້ວຍຕົນເອງ ກວມເອົາ 71.20% ແລະ ອາຈານສ່ວນຫຼາຍມີຄວາມຮູ້ເລື່ອງການເຂົ້າໃຊ້ບໍລິການຫໍສະໝຸດໂດຍການຮຽນຮູ້ດ້ວຍຕົນເອງ ກວມເອົາ 87.20%, ການຄົ້ນຫາປຶ້ມ ຫຼື ເອກະສານທີ່ຕ້ອງການຫໍສະໝຸດ: ນັກສຶກສາສ່ວນຫຼາຍຍ່າງໄປຄົ້ນຫາປຶ້ມ ຫຼື ເອກະສານທີ່ຕ້ອງການຕາມຖ້ານຕູ້ດ້ວຍຕົນເອງ ກວມເອົາ 88.20% .ແລະ ອາຈານສ່ວນຫຼາຍຍ່າງໄປຄົ້ນຫາປຶ້ມ ຫຼື ເອກະສານທີ່ຕ້ອງການຕາມຖ້ານຕູ້ດ້ວຍຕົນເອງ ກວມເອົາ 87.20%, ຊັບພະຍາກອນສາລະເທດທີ່ໃຊ້ໃນຫໍສະ

ໝຸດ: ນັກສຶກສາສ່ວນຫຼາຍໃຊ້ປຶ້ມຕຳລາ ກວມເອົາ 58.80% ແລະ ອາຈານສ່ວນຫຼາຍໃຊ້ປຶ້ມຕາລາ ກວມເອົາ 58.60%, ພາສາຂອງຊັບພະຍາກອນສາລະສົນເທດທີ່ໃຊ້ໃນຫໍສະໝຸດ: ນັກສຶກສາສ່ວນຫຼາຍໃຊ້ຊັບພະຍາກອນສາລະສົນເທດທີ່ເປັນພາສາລາວ ກວມເອົາ 87.90% ແລະ ອາຈານສ່ວນຫຼາຍໃຊ້ຊັບພະຍາກອນສາລະສົນເທດທີ່ເປັນພາສາລາວ ກວມເອົາ 91.00%, ລະດັບການໃຊ້ບໍລິການຫໍສະໝຸດ: ນັກສຶກສາສ່ວນຫຼາຍໃຊ້ບໍລິການຢືມ-ສົ່ງປຶ້ມ ໃນລະດັບ 3.14 ແລະ ອາຈານສ່ວນຫຼາຍກໍ່ໃຊ້ບໍລິການຢືມ-ສົ່ງປຶ້ມ ໃນລະດັບ 3.41.

**3.3 ບັນຫາໃນການໃຊ້ບໍລິການຫໍສະໝຸດ**

**ດ້ານຫໍສະໝຸດ:** ຜົນໄດ້ຮັບຈາກການສຶກສາບັນຫາໃນການໃຊ້ບໍລິການຫໍສະໝຸດ ພົບວ່າ: ນັກສຶກສາສ່ວນຫຼາຍໃຫ້ຄວາມເຫັນວ່າ: ສະພາບແວດລ້ອມທົ່ວໄປພາຍໃນຫໍສະໝຸດທີ່ເປັນສິ່ງອຳນວຍຄວາມສະດວກໃຫ້ແກ່ຜູ້ໃຊ້ບໍລິການຍັງມີບັນຫາຄື: ຫໍສະໝຸດບໍ່ມີຈັກກ໊ອບປີ້ເອກະສານໄວ້ໃຫ້ບໍລິການແກ່ຜູ້ໃຊ້ເຊິ່ງເປັນບັນຫາໃນລະດັບ 3.63 ແລະ ອາຈານກໍ່ໃຫ້ຄວາມເຫັນວ່າ: ຫໍສະໝຸດບໍ່ມີຈັກກ໊ອບປີ້ເອກະສານໄວ້ໃຫ້ບໍລິການແກ່ຜູ້ໃຊ້ເຊິ່ງເປັນບັນຫາໃນລະດັບ 3.64, ບັນຫາດ້ານຊັບພະຍາກອນສາລະສົນເທດທີ່ໃຊ້ໃນຫໍສະໝຸດພົບວ່າ: ນັກສຶກສາສ່ວນຫຼາຍໃຫ້ຄວາມເຫັນວ່າ: ຊັບພະຍາກອນສາລະສົນເທດທີ່ໃຊ້ສຶກສາຄົ້ນຄວ້າເພື່ອປະກອບໃນການຮຽນບໍ່ພຽງພໍໃນລະດັບ 3.53 ແລະ ອາຈານກໍ່ໃຫ້ຄວາມເຫັນວ່າ: ຊັບພະຍາກອນສາລະສົນເທດທີ່ໃຊ້ຄົ້ນຄວ້າເພື່ອປະກອບໃນການສອນບໍ່ພຽງພໍໃນລະດັບ 3.34, ບັນຫາດ້ານເທັກໂນໂລຢີທີ່ພົບໃນການໃຊ້ບໍລິການຫໍສະໝຸດພົບວ່າ: ນັກສຶກສາໃຫ້ຄວາມເຫັນວ່າລະບົບເຄືອຂ່າຍຄອມພິວເຕີທີ່ໃຊ້ສືບຄົ້ນປຶ້ມໃນຖານຂໍ້ມູນ) OPAC (ມີຄວາມລ້າຊ້າໃນລະດັບ 3.39 ແລະ ອາຈານກໍ່ໃຫ້ຄວາມເຫັນວ່າລະບົບເຄືອຂ່າຍຄອມພິວເຕີທີ່ໃຊ້ສືບຄົ້ນປຶ້ມໃນຖານຂໍ້ມູນ (OPAC ( ມີຄວາມລ້າຊ້າໃນລະດັບ 3.29, ບັນຫາດ້ານການປະຊາສຳພັນໃນການໃຊ້ບໍລິການຫໍສະໝຸດພົບວ່າ: ນັກສຶກສາໃຫ້ຄວາມເຫັນວ່າຫໍສະໝຸດບໍ່ມີການປະຊາສຳພັນໃຫ້ຮູ້ເຖິງບໍລິການຕ່າງໆຂອງຫໍສະໝຸດໃນລະດັບ 3.16 ແລະ ອາຈານກໍ່ໃຫ້ຄວາມເຫັນວ່າ: ຫໍສະໝຸດບໍ່ມີການປະຊາສຳພັນໃຫ້ຮູ້ເຖິງບໍລິການຕ່າງໆຂອງຫໍສະໝຸດໃນລະດັບ 3.19.

**ດ້ານຜູ້ໃຊ້ບໍລິການ:** ຜົນໄດ້ຮັບຈາກການສຶກສາບັນຫາດ້ານຜູ້ໃຊ້ບໍລິການຂອງຫໍສະໝຸດພົບວ່າ: ນັກສຶກສາສ່ວນຫຼາຍໃຫ້ຄວາມເຫັນວ່າ: ບໍ່ມີເວລາເຂົ້າຫໍສະໝຸດເນື່ອງຈາກວ່າຫໍສະໝຸດປິດໃນຊ່ວງພັກທ່ຽງ (ເວລາ 11:30-13:30)ໃນລະດັບ 3.54 ແລະ ອາຈານສ່ວນຫຼາຍກໍ່ໃຫ້ຄວາມເຫັນວ່າ: ບໍ່ມີເວລາເຂົ້າຫໍສະໝຸດເນື່ອງຈາກວ່າຫໍສະໝຸດປິດໃນຊ່ວງພັກທ່ຽງ (ເວລາ 11:30-13:30)ໃນລະດັບ 3.12.

**ດ້ານຜູ້ໃຫ້ບໍລິການ:** ຜົນໄດ້ຮັບຈາກການສຶກສາບັນຫາດ້ານຜູ້ໃຫ້ບໍລິການຂອງຫໍສະໝຸດພົບວ່າ: ນັກສຶກສາ ສ່ວນຫຼາຍໃຫ້ຄວາມເຫັນວ່າ: ຜູ້ໃຫ້ບໍລິການມີຈຳນວນໜ້ອຍໃຫ້ບໍລິການບໍ່ທົ່ວເຖິງໃນລະດັບ 3.27 ແລະ ອາຈານສ່ວນຫຼາຍກໍ່ໃຫ້ຄວາມເຫັນວ່າ: ຜູ້ໃຫ້ບໍລິການມີຈຳນວນໜ້ອຍໃຫ້ບໍລິການບໍ່ທົ່ວເຖິງ ໃນລະດັບ 3.17.

**3.4. ຄວາມຕ້ອງການໃຊ້ບໍລິການຫໍສະໝຸດ**

ຜົນໄດ້ຮັບຈາກການສຶກສາຄວາມຕ້ອງການ ໃຊ້ບໍລິການຫໍສະໝຸດຄອງນັກສຶກສາ ແລະ ອາຈານພົບວ່າ: ນັກສຶກສາຕ້ອງການໃຫ້ຫໍສະໝຸດມີຄວາມສະອາດ ເປັນລະບຽບ ແລະ ມີການຕົບແຕ່ງທີ່ສວຍງາມໃນລະດັບ 3.60 ແລະ ອາຈານກໍ່ຕ້ອງການໃຫ້ຫໍສະໝຸດ ມີຄວາມສະອາດ ເປັນລະບຽບ ແລະ ມີການຕົບແຕ່ງທີ່ສວຍງາມໃນລະດັບ4.04, ນັກສຶກສາຕ້ອງການວາລະສານພາສາລາວໃຫ້ຄົບທຸກລາຍການໃນລະດັບ 3.55 ແລະ ອາຈານຕ້ອງການປຶ້ມອ້າງອີງ

(ພຶດຈະນານຸກົມລາວ)ໃນລະດັບ 3.89, ນັກສຶກສາສ່ວນຫຼາຍຕ້ອງການໃຊ້ບໍລິການຫໍສະໝຸດໃນວັນຈັນ-ວັນສຸກ ເວລາ 8:00ໂມງ ຈົນຮອດ 16:00ໂມງໃນລະດັບ 3.74 ແລະ ອາຈານກໍ່ຕ້ອງການໃຊ້ບໍລິການຫໍສະໝຸດໃນວັນຈັນ-ວັນສຸກ ເວລາ 8:00ໂມງ ຈົນຮອດ 16:00ໂມງໃນລະດັບ 3.81, ນັກສຶກສາຕ້ອງການຢືມວິທະຍານິພົນ ແລະ ບົດໂຄງການຈົບຊັ້ນໃນລະດັບ 3.71 ແລະ ອາຈານຕ້ອງການຢືມວິທະຍານິພົນ ແລະ ບົດວິໄຈ ໃນລະດັບ 3.55, ນັກສຶກສາ ຕ້ອງການບໍລິການສອນໃນລະດັບ 3.49 ສ່ວນ ອາຈານຕ້ອງການບໍລິການແນະນຳການອ່ານໃນລະດັບ 3.72.

### 3.5 ຄວາມຄິດເຫັນຂອງນັກສຶກສາ ແລະ ອາຈານ

ຜົນໄດ້ຮັບຈາກການສຶກສາຂໍ້ມູນຄວາມຄິດເຫັນຈາກຂໍ້ສະເໜີແນະຂອງນັກສຶກສາ ແລະ ອາຈານສາມາດສຳຫຼຸບໄດ້ດັ່ງນີ້: ຫໍສະໝຸດຄວນມີການຕົບແຕ່ງໃຫ້ສວຍງາມ ແລະ ຄວນດຳເນີການໃຫ້ມີບໍລິການນ້ຳດື່ມ, ຄວນຈັດຫາວາລະສານພາສາລາວໃຫ້ຄົບທຸກລາຍການ, ຄວນຈັດຫາປຶ້ມອ້າງອີງທີ່ເປັນພົດຈະນານຸກົມລາວ ແລະ ຈັດຫາປຶ້ມພາສາລາວທີ່ສອດຄ້ອງກັບຫຼັກສູດການຮຽນ-ການສອນ, ຄວນເປີດບໍລິການໃນຊ່ວງເວລາພັກທຽ່ງ)ເວລາ 11:30-13:30 ໂມງ(ຄວນໃຫ້ຢືມປຶ້ມບົດໂຄງການຈົບຊັ້ນຂອງນັກສຶກສາ, ຄວນຈັດຫາຄອມພິວເຕີ ແລະ ບໍລິການສືບຄົ້ນຈາກອິນເຕີເນັດ ພ້ອມທັງຈັດຫາຈັກກ້ອບປີເອກະສານ, ຄວນຈັດບໍລິການສາລະສົນເທດເພີ່ມເຕີມເຊັ່ນ: ບໍລິການສອນ ແລະ ບໍລິການແນະນຳການອ່ານ.

## 4. ວິພາກຜົນ

ຈາກການສະຫຼຸບຜົນການຄົ້ນຄວ້າສະພາບການໃຊ້, ບັນຫາການໃຊ້, ຄວາມຕ້ອງການໃຊ້ຫໍສະໝຸດຂອງນັກສຶກສາ ແລະ ອາຈານໃນມະຫາວິທະຍາໄລ ສຸພານຸວົງ ສາມາດອະພິປາຍຜົນໂດຍການປຽບທຽບດັ່ງນີ້:

### 4.1 ການໃຊ້ບໍລິການຫໍສະໝຸດ

ນັກສຶກສາ ແລະ ອາຈານສ່ວນຫຼາຍເປັນເພດຊາຍກວມເຖິງ (60.44% ແລະ 65.40%) ນັກສຶກສາມີຈຸດ ປະສົງເຂົ້າໃຊ້ຫໍສະໝຸດ ເພື່ອສຶກສາຫາຄວາມຮູ້ເພີ່ມເຕີມ ສ່ວນອາຈານມີຈຸດປະສົງເຂົ້າໃຊ້ຫໍສະໝຸດເພື່ອອ່ານປຶ້ມຕຳ ລາທາງວິຊາການຂອງຫໍສະໝຸດ, ນັກສຶກສາ ແລະ ອາຈານເຂົ້າໃຊ້ຫໍສະໝຸດນອາທິດລະ 1 ຄັ້ງ ເນື່ອງຈາກຫໍສະໝຸດປິດບໍລິການໃນຊ່ວງພັກທຽ່ງ ເຊິ່ງເປັນເວລາຫວ່າງຈາກການຮຽນ-ການສອນ ແລະ ມີເວລາເຂົ້າໃຊ້ຫໍສະໝຸດໃນຊ່ວງຫວ່າງຈາກການຮຽນການສອນ ດັ່ງນັ້ນຈຶ່ງເຮັດໃຫ້ນັກ ສຶກສາ ແລະ ອາຈານເຂົ້າໃຊ້ຫໍສະໝຸດໄດ້ພຽງອາທິດລະ 1 ຄັ້ງ, ນັກສຶກສາ ແລະ ອາຈານຄົ້ນຫາປຶ້ມ ຫຼືເອກະສານຕາມຖ້ານຕູ້ດ້ວຍຕົນເອງເນື່ອງຈາກວ່າຫໍສະໝຸດມີປ້າຍແນະນຳຢ່າງລະອຽດ ແລະ ມີເລກໝວດໝູ່ກຳກັບຕິດຕາມຖ້ານຕູ້ຊັດເຈນ, ໃຊ້ປຶ້ມຕຳລາຫຼາຍທີ່ສຸດ ແລະ ໃຊ້ປຶ້ມທີ່ເປັນພາສາລາວ ນອກຈາກນີ້ຍັງໃຊ້ບໍລິການຫໍສະໝຸດເພື່ອຢືມ-ສົ່ງປຶ້ມ.

### 4.2 ບັນຫາໃນການໃຊ້ບໍລິການຫໍສະໝຸດ

ນັກສຶກສາ ແລະ ອາຈານໃຫ້ຄວາມເຫັນສອດຄ້ອງກັນວ່າ: ຫໍສະໝຸດບໍ່ມີຈັກກ້ອບປີໃຫ້ບໍລິການແກ່ຜູ້ໃຊ້ ເຊິ່ງເປັນບັນຫາເນື່ອງຈາກຫໍສະໝຸດມີປຶ້ມອ້າງອີງທີ່ບໍ່ອະນຸຍາດໃຫ້ຢືມອອກເຊັ່ນ: ວິທະຍານິພົນ, ບົດວິໄຈ, ບົດໂຄງການຈົບຊັ້ນຂອງນັກສຶກສາ, ວາລະສານ ແລະ ໜັງສືພິມ ດັ່ງນັ້ນຈຶ່ງຕ້ອງການໃຫ້ມີຈັກກ້ອບປີເອກະສານເພື່ອອຳນວຍຄວາມສະດວກໃນການໃຊ້ຊັບພະຍາກອນຂອງຫໍສະໝຸດ, ນັກສຶກສາ ແລະ ອາຈານໃຫ້ຄວາມເຫັນວ່າ: ຊັບພະຍາກອນສາລະສົນເທດຂອງຫໍສະໝຸດທີ່ໃຊ້ຄົ້ນຄວ້າເພື່ອປະກອບໃນການຮຽນ-ການສອນບໍ່ພຽງພໍ, ເຄື່ອຂ່າຍຄອມພິວເຕີທີ່ໃຊ້ໃນການສືບຄົ້ນປຶ້ມໃນຖານຂໍ້ມູນ (OPAC)ມີຄວາມລ້າຊ້າ, ຫໍສະໝຸດບໍ່ມີການປະຊາສຳພັນໃຫ້ຮູ້ເຖິງບໍລິການຕ່າງໆຂອງຫໍສະໝຸດ ແລະ ບັນຫາຂອງຜູ້

ໃຊ້ເອງ ທີ່ບໍ່ມີເວລາເຂົ້າໃຊ້ຫໍສະໝຸດເນື່ອງຈາກເວລາຫວ່າງຈາກການຮຽນ-ການສອນເພື່ອຈະເຂົ້າໃຊ້ບໍລິການຫໍສະໝຸດ ແຕ່ເປັນຊ່ວງທີ່ຫໍສະໝຸດປິດໃນເວລາພັກທ່ຽງ ນອກຈາກນີ້ຜູ້ໃຊ້ຍັງໃຫ້ຄວາມເຫັນສອດຄ້ອງກັນວ່າ: ຜູ້ໃຫ້ບໍລິການ ມີຈຳນວນໜ້ອຍໃຫ້ບໍລິການບໍ່ທົ່ວເຖິງ.

### 3.3 ຄວາມຕ້ອງການໃຊ້ບໍລິການຫໍສະໝຸດ

ນັກສຶກສາ ແລະ ອາຈານຕ້ອງການໃຫ້ຫໍສະໝຸດມີຄວາມສະອາດ ເປັນລະບຽບ ແລະ ມີການຕົບແຕ່ງທີ່ສວຍງາມ ເພາະວ່າການທີ່ຫໍສະໝຸດມີສີສັນ, ມີບັນຍາກາດດີ ແລະ ມີສິ່ງແວດລ້ອມທີ່ເອື້ອອຳນວຍເໝາະສົມກັບການອ່ານເຊິ່ງເປັນແຮງຈູງໃຈເຮັດໃຫ້ຜູ້ໃຊ້ມາໃຊ້ບໍລິການຢ່າງຕໍ່ເນື່ອງ, ນັກສຶກສາຕ້ອງການວາລະສານພາສາລາວໃຫ້ຄົບທຸກລາຍການສ່ວນອາຈານຕ້ອງການປຶ້ມອ້າງອີງ (ວັດຈະນານຸ ກົມລາວ) ເນື່ອງຈາກຜູ້ໃຊ້ບໍລິການມີຄວາມຕ້ອງການຊັບພະຍາກອນສາລະສົນເທດທີ່ນອກເໜືອຈາກລາຍວິຊາໃນຂະບວນການຮຽນ-ການສອນເພື່ອສຶກສາຫາຄວາມຮູ້ເພີ່ມເຕີມ, ນັກສຶກສາ ແລະ ອາຈານຕ້ອງການໃຊ້ບໍລິການຫໍສະໝຸດໃນຊ່ວງເວລາພັກທ່ຽງ (11:30-13:30) ເນື່ອງຈາກນັກສຶກສາ ແລະ ອາຈານມີເວລາເຂົ້າຫໍສະໝຸດໃນຊ່ວງພັກ ທ່ຽງເຊິ່ງເປັນເວລາຫວ່າງຈາກການຮຽນ-ການສອນ, ຕ້ອງ ການຢືມວິທະຍານິພົນ ແລະ ບົດໂຄງການຈົບຊັ້ນ ເຊິ່ງເປັນເອກະສານທີ່ສອດຄ້ອງຕໍ່ການສຶກສາຄົ້ນຄວ້າ ແລະ ວິໄຈ ນອກຈາກນີ້, ນັກສຶກສາຍັງຕ້ອງການບໍລິການສອນເຊິ່ງເປັນບໍລິການສົ່ງເສີມຜູ້ໃຊ້ໃຫ້ມີທັກສະໃນການໃຊ້ເຄື່ອງມືຊ່ວຍຄົ້ນ ສ່ວນອາຈານຕ້ອງການບໍລິການແນະນຳການອ່ານ ເຊິ່ງ ບໍລິການທີ່ຫໍສະໝຸດຈັດຂຶ້ນເພື່ອຊ່ວຍແນະນຳປຶ້ມ, ວາລະສານ ແລະ ໜັງສືພິມໃຫ້ແກ່ຜູ້ໃຊ້ດ້ວຍວິທີການຕ່າງໆ ເພື່ອຊ່ວຍໃຫ້ຜູ້ໃຊ້ມີທັກສະໃນການໃຊ້ຫໍສະໝຸດ ແລະ ສາມາດຮູ້ເຖິງກິດຈະກຳພ ແລະ ບໍລິການຕ່າງໆທີ່ຫໍສະໝຸດຈັດຂຶ້ນໄດ້ທັນເວລາ.

### 5. ສະຫຼຸບ

ຈາກການສຶກສາ ການໃຊ້, ບັນຫາໃນການໃຊ້ ແລະ ຄວາມຕ້ອງການໃຊ້ບໍລິການຫໍສະໝຸດຂອງນັກສຶກສາ ແລະ ອາຈານສາມາດສະຫຼຸບໄດ້ວ່າ: ຈຸດປະສົງຫຼັກໃນການເຂົ້າໃຊ້ບໍລິການຫໍສະໝຸດເພື່ອສຶກສາຫາຄວາມຮູ້ເພີ່ມເຕີມທີ່ນອກເໜືອຂາກລາຍວິຊາຮຽນ ແລະອາຈານມີຄວາມຕ້ອງການສຶກສາຫາຄວາມຮູ້ທາງວິຊາການເພື່ອປະກອບເຂົ້າໃນການສອນ, ໃຊ້ປະເພດປຶ້ມຕຳລາທີ່ເປັນພາສາລາວ ແລະ ໃຊ້ບໍລິການຫໍສະໝຸດເພື່ອຢືມ-ສົ່ງປຶ້ມ ສ່ວນບັນຫາຫຼັກໃນການໃຊ້ບໍລິການຫໍສະໝຸດແມ່ນ ຫໍສະໝຸດບໍ່ມີຈັກກ້ອບປີໃຫ້ບໍລິການແກ່ຜູ້ໃຊ້, ຊັບພະຍາກອນສາລະສົນເທດຂອງຫໍສະໝຸດທີ່ໃຊ້ຄົ້ນຄວ້າເພື່ອປະກອບໃນການຮຽນ-ການສອນບໍ່ພຽງພໍ, ເຄື່ອຂ່າຍຄອມພິວເຕີທີ່ໃຊ້ໃນການສືບຄົ້ນ(OPAC)ມີຄວາມລ້າຊ້າ ແລະ ຄວາມຕ້ອງການຫຼັກຢາກໃຫ້ຫໍສະໝຸດມີຄວາມສະອາດ ເປັນລະບຽບ ແລະ ມີການຕົບແຕ່ງທີ່ສວຍ, ຕ້ອງການວາລະສານພາສາລາວໃຫ້ຄົບທຸກລາຍການ, ຕ້ອງການປຶ້ມອ້າງອີງ (ວັດຈະນານຸກົມລາວ), ຕ້ອງການໃຫ້ ຫໍສະໝຸດເປີດບໍລິການໃນຊ່ວງພັກທ່ຽງ (11:30-13:30), ຕ້ອງການຢືມວິທະຍານິພົນ ແລະ ບົດໂຄງການຈົບຊັ້ນ, ຕ້ອງການໃຊ້ບໍລິການສອນ ແລະ ບໍລິການແນະນຳການອ່ານ.

### 6. ຄຳຂອບໃຈ

ຂໍຂໍສະແດງຄວາມຮູ້ບຸນຄຸນ ແລະ ຄຳຂອບໃຈມາຍັງຄະນະນຳມະຫາວິທະຍາໄລ ສຸພານຸວົງ ທີ່ໃຫ້ໂອກາດໄປສຶກສາຄົ້ນຄວ້າ, ຂໍຂອບໃຈມາຍັງໂຄງການ Korea International Cooperation Agency (KOICA) ທີ່ໃຫ້ທຶນສະໜັບສະໜູນໃນການຄົ້ນຄວ້າ ແລະ ຂໍຂອບໃຈມາຍັງຄະນະນຳແຕ່ລະຄະນະທີ່ໃຫ້

ຄວາມຮ່ວມມື ແລະ ອຳນວຍຄວາມສະດວກໃນການເກັບຂໍ້ມູນ ຈົນປະສົບຜົນສຳເລັດໄປດ້ວຍດີ.

## 7. ເອກະສານອ້າງອີງ


ຫໍສະໝຸດ ມະຫາວິທະຍາໄລ ສຸພານຸວົງ. (2016) ພະແນກຄຸ້ມຄອງ ແລະ ບໍລິການ, ໜ່ວຍງານຢືມ-ສົ່ງປຶ້ມຫຼວງພະບາງ: ມະຫາວິທະຍາໄລສຸພານຸວົງ.

ມະຫາວິທະຍາໄລສຸພານຸວົງຫ້ອງການຈັດຕັ້ງ.(2017). ຕາຕະລາງບັນທຶກສະຖິຕິພະນັກງານ ລັດຖະກອນ ມະຫາວິທະຍາໄລສຸພານຸວົງ ປະຈຳປີ 2016-2017.

ມະຫາວິທະຍາໄລສຸພານຸວົງຫ້ອງການວິຊາການ. (2017). ຕາຕະລາງບັນທຶກສະຫຼຸບຜົນການລົງທະບຽນຂອງນັກສຶກສາມະຫາວິທະຍາໄລສຸພານຸວົງ ປະຈຳປີ 2016-2017.

ມະຫາວິທະຍາໄລ ສຸພານຸວົງ. (2015). ຄູ່ມືການສຶກສາສຳ ລັບອາຈານ ແລະ ນັກສຶກສາ ມະຫາວິທະຍາໄລສຸພານຸວົງ.

ມະຫາວິທະຍາໄລ ຊຽງໃໝ່ສຳນັກຫໍສະໝຸດ. (2013). ລາຍງານປະຈາປີ 2012. ຊຽງໃໝ່: ສຳນັກຫໍສະໝຸດ ມະຫາວິທະຍາໄລຊຊຽງໃໝ່.